**ມິຊຊາອາທິດທີ 4 ກຳນົດພຣະກຣິສຕະຄົມ ປີ A**

**ວັນທີ 22 ທັນວາ 2019**



**ພຣະວໍລະສານໂດຍນັກບຸນມັດເທວ 1, 18-24**

ພຣະເຢຊູເຈົ້າໄດ້ຊົງບັງເກີດມາດັ່ງນີ້: ພຣະນາງມາຣີອາມານດາຂອງພຣະອົງເປັນຄູ່ໝັ້ນຂອງຢໍແຊ. ກ່ອນທີ່ທ່ານທັງສອງໄດ້ຢູ່ຮ່ວມກັນນາງກໍໄດ້ຊົງຄັນດ້ວຍລິດພຣະຈິດ. ຢໍແຊຜູ້ສາມີເປັນຄົນຊອບທຳແລະບໍ່ຢາກໃຫ້ນາງເສຍໜ້າ ຈຶ່ງຕົກລົງໃນໃຈວ່າຈະສົ່ງນາງທາງລັບ.

ໃນເວລາທ່ານກຳລັງຄິດຢູ່ໃນໃຈດັ່ງນີ້ ເທວະດາອົງໜຶ່ງຂອງພຣະອົງເຈົ້າກໍປະຈັກມາຫາທ່ານທາງຄວາມຝັນແລະກ່າວກັບທ່ານວ່າ: ຢໍແຊບຸດຂອງດາວິດເອີຍ! ຢ່າວິຕົກເລີຍໃນການຮັບເອົານາງມາຣີອາພັນລະຍາຂອງເຈົ້າໄວ້ຮ່ວມເຮືອນ. ດ້ວຍວ່າການປະຕິສົນໃນນາງນັ້ນເປັນກິດຈະການຂອງພຣະຈິດເຈົ້າ. ນາງຈະບັງເກີດບຸດຊາຍຄົນໜຶ່ງແລະເຈົ້າຈະຕັ້ງຊື່ວ່າເຢຊູ. ດ້ວຍເຫດວ່າແມ່ນບຸດຜູ້ນີ້ແລ້ວທີ່ຈະຊ່ວຍປະຊາກອນຂອງພຣະອົງໃຫ້ຫວິດພົ້ນຈາກບາບຂອງເຂົາ. ສິ່ງເຫລົ່ານີ້ໄດ້ເປັນມາກໍເພື່ອໃຫ້ສຳເລັດຕາມວາຈາຂອງພຣະອົງເຈົ້າໂດຍທາງປະພາສົກວ່າ: ນາງພົມມະຈາລີຈະຊົງຄັນແລະຈະບັງເກີດບຸດຊາຍຄົນໜຶ່ງທີ່ຈະໄດ້ຮັບນາມວ່າ: ແອມມານູແອນ, ເປັນຊື່ທີ່ມີຄວາມໝາຍວ່າ: ພຣະເຈົ້າສະຖິດຢູ່ກັບພວກເຮົາ.

ເມື່ອຕື່ນນອນແລ້ວ, ຢໍແຊກໍກະທຳຕາມທີ່ເທວະດາຂອງພຣະອົງເຈົ້າໄດ້ສັ່ງບອກ ຄືທ່ານໄດ້ຮັບເອົາພັນລະຍາຂອງທ່ານໄວ້ຢູ່ຮ່ວມເຮືອນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 1, 18-24**

ວາຈາພຣະເຈົ້າວັນນີ້ເລົ່າເຖິງເຫດການແຫ່ງການບັງເກີດມາຂອງພຣະເຢຊູ ພຣະບຸດຂອງພຣະເຈົ້າຜ່ານທາງນາງມາຣີອາ. ເປັນຫຍັງພຣະກຣິສຕະຈັກຈຶ່ງໃຫ້ພວກເຮົາຟັງວາຈາພຣະເຈົ້າຕອນນີ້ໃນວັນອາທິດທີສີ່ກຳນົດພຣະກຣິສຕະຄົມ, ໃນກຳນົດທີ່ພວກເຮົາກຳລັງກະກຽມແລະລໍຖ້າການບັງເກີດມາຂອງອົງພຣະມະຫາໄຖ່? ແນ່ນອນ, ພຣະກຣິສຕະຈັກອາດມີເຫດຜົນແລະຢາກບອກພວກເຮົາໃຫ້ຮູ້ຈັກບາງສິ່ງບາງຢ່າງເຖິງທຳລ້ຳເລີກແຫ່ງການບັງເກີດມາຂອງພຣະບຸດພຣະເຈົ້າ. ແຕ່ມີສິ່ງໜຶ່ງທີ່ພວກເຮົາສາມາດເຫັນໄດ້ໃນວາຈາພຣະເຈົ້າວັນນີ້ ນັ້ນຄືນັກບຸນຢໍແຊຜູ້ເປັນຄູ່ໝັ້ນຂອງນາງມາຣີອາ.

ນັກບຸນຢໍແຊນີ້ປຽບເໝືອນຕົວແທນຂອງມະນຸດທັງມວນເມື່ອຢູ່ຕໍ່ໜ້າລະຫັດສະທຳອັນຍິ່ງໃຫຍ່ຊຶ່ງພຣະເຈົ້າໄດ້ກະທຳກັບມະນຸດຜ່ານນາງມາຣີອາ. ສິ່ງທຳອິດທີ່ນັກບຸນຢໍແຊສະແດງອອກເມື່ອຢູ່ຕໍ່ໜ້າເຫດການນີ້ ຄືຄວາມບໍ່ເຂົ້າໃຈເຖິງສິ່ງທີ່ເປັນມາກັບຄູ່ໝັ້ນຂອງຕົນ. ເມື່ອເປັນດັ່ງນີ້ແລ້ວທ່ານຈຶ່ງຄິດໃນໃຈແບບພາສາມະນຸດຄືສົ່ງນາງມາຣີອາໄປທາງລັບເພື່ອບໍ່ໃຫ້ເກີດບັນຫາຂຶ້ນກັບຕົວເອງແລະກັບຄູ່ໝັ້ນຂອງທ່ານດ້ວຍ. ແຕ່ສິ່ງທີ່ທ່ານຄິດນີ້ບໍ່ໄດ້ສອດຄ່ອງຕາມນ້ຳພຣະໄທຂອງພຣະເຈົ້າ. ນັກບຸນຢໍແຊຕ້ອງກະທຳຢ່າງໃດ? ສິ່ງທີ່ທ່ານກະທຳຄື ເປີດໃຈເພື່ອຮັບຟັງສຽງຂອງພຣະເຈົ້າແລະປະຕິບັດຕາມນ້ຳພຣະໄທຂອງພຣະອົງ. ເພາະການບັງເກີດມາຂອງພຣະເຢຊູເຈົ້ານັ້ນບໍ່ໄດ້ມາຈາກຄວາມປາດຖະໜາຂອງມະນຸດ, ແຕ່ແມ່ນກິດຈະການຂອງພຣະຈິດເຈົ້າ.

ສິ່ງນີ້ມີຄວາມກ່ຽວພັນຫຍັງກັບຊີວິດຂອງພວກເຮົາ? ສິ່ງນີ້ຢາກບອກພວກເຮົາວ່າ ໃນຊີວິດຂອງພວກເຮົາບາງຄັ້ງກໍມີເຫດການຫລາຍສິ່ງຫລາຍຢ່າງທີ່ເກີດເປັນມາ ແຕ່ພວກເຮົາບໍ່ສາມາດເຂົ້າໃຈໄດ້. ແລະບາງຄັ້ງພວກເຮົາຄິດຢາກກະທຳສິ່ງໃດໜຶ່ງຕາມຄວາມຕັ້ງໃຈຂອງພວກເຮົາ ແຕ່ສິ່ງນັ້ນກໍບໍ່ສຳເລັດ. ທ້າຍສຸດແລ້ວພວກເຮົາກໍພົບກັບທາງຕັນ, ຄວາມບໍ່ເຂົ້າໃຈແລະບາງຄັ້ງກໍນຳພວກເຮົາໄປສູ່ຄວາມທໍ້ຖອຍແລະຂາດຄວາມຫວັງ. ຍິ່ງໄປກວ່ານັ້ນ, ອາດທຳໃຫ້ພວກເຮົາຂາດຄວາມເຊື່ອໃນພຣະເຈົ້າອີກດ້ວຍ. ແຕ່ຖ້າພວກເຮົາເອົານັກບຸນຢໍແຊມາເປັນແບບຢ່າງໃນຊີວິດແລ້ວ ພວກເຮົາຈະເຂົ້າໃຈວ່າສິ່ງທີ່ເປັນມາໃນຊີວິດຂ້ອຍວັນນີ້ບໍ່ແມ່ນມີແຕ່ຂ້ອຍເທົ່ານັ້ນ, ແຕ່ນັກບຸນຢໍແຊກໍໄດ້ປະສົບພົບພໍ້ເຊັ່ນດຽວກັນ. ແຕ່ທ່ານໄດ້ກະທຳຢ່າງໃດ? ທ່ານໄດ້ເປີດໃຈເພື່ອຮັບຟັງສຽງຂອງພຣະເຈົ້າແລະປະຕິບັດຕາມນ້ຳພຣະໄທຂອງພຣະອົງ. ດັ່ງນັ້ນ, ພວກເຮົາກໍຕ້ອງກະທຳເໝືອນກັບທ່ານນັກບຸນ. ເພາະຊີວິດຂອງພວກເຮົາແລະທຸກສິ່ງທີ່ເປັນມາໃນຊີວິດຂອງພວກເຮົາລ້ວນແຕ່ແມ່ນນ້ຳພຣະໄທຂອງພຣະເຈົ້າ. ແລະນ້ຳພຣະໄທຂອງພຣະເຈົ້າແມ່ນຫຍັງ? ນ້ຳພຣະໄທຂອງພຣະເຈົ້າຄືໃຫ້ພວກເຮົາມີຊີວິດແລະແມ່ນຊີວິດທີ່ເກີດດອກອອກຜົນແລະໝັ້ນຄົງຖາວອນ.

ຂໍໃຫ້ວາຈາພຣະເຈົ້າວັນນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງການບັງເກີດມາຂອງພຣະບຸດພຣະເຈົ້າ. ພຣະອົງເກີດມາບໍ່ແມ່ນຍ້ອນຄວາມປາດຖະໜາຂອງມະນຸດ, ແຕ່ຍ້ອນກິດຈະການຂອງພຣະຈິດເຈົ້າ. ແລະພຣະອົງມາໃນໂລກນີ້ບໍ່ແມ່ນເພື່ອທຳຕາມນ້ຳພຣະໄທຂອງພຣະອົງ, ແຕ່ເພື່ອທຳຕາມນ້ຳພຣະໄທຂອງຜູ້ທີ່ຊົງສົ່ງພຣະອົງມາ. ແລະນ້ຳພຣະໄທຂອງພຣະບິດາເຈົ້າສະຫວັນຄືໃຫ້ທຸກຄົນທີ່ເຫັນແລະເຊື່ອໃນພຣະເຢຊູພຣະບຸດຂອງພຣະອົງໄດ້ມີຊີວິດແລະແມ່ນຊີວິດທີ່ຖາວອນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ